ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 06 /ທຫ
ນະຄອນຫຼວງວຽງຈັນ, ວັນທີ: 28 ກຸມພາ 2017

ສຳນັກງານ ຄຄຊ
ເລກທີ 0235
ວັນທີ 01 MAR 2017
ໂທລະສັບ 021 217770

**ລາຍງານການເຄື່ອນໄຫວປະຈຳອາທິດ**
**ທີ 06-10/02/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**
**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າ 0,94% ທຽບເງິນເອີໂຣ ເນື່ອງຈາກຈຳນວນຜູ້ຂໍສະຫວັດດີການວ່າງງານ ຄັ້ງທຳອິດໃນອາທິດທີ 4/2/2017 ຜ່ານມາ ຂອງສາຫະລັດອາເມລິກາ ຫຼຸດລົງຈາກ 246.000 ຄົນ ມາເປັນ 234.000 ຄົນ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 03/02/2017 | ອາທິດນີ້ 10/02/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0740 | 1,0640 | 0,94% |
| ໂດລາ/ເຢນ | 113,10 | 113,67 | -0,50% |
| ໂດລາ/ບາດ | 35,070 | 35,070 | 0,00% |
| ໂດລາ/ເປໂຊ | 49,86 | 49,93 | -0,13% |
| ໂດລາ/ຣູເປັຍ | 13.340,00 | 13.315,00 | 0,19% |
| ໂດລາ/ໂດລາສິງກະໂປ | 1,4141 | 1,4217 | -0,53% |
| ໂດລາ/ຢວນ | 6,8717 | 6,8795 | -0,11% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 2,53% ຈາກ 53,70 ໂດລາ/ບາເຣວ ມາເປັນ 55,06 ໂດລາ/ບາເຣວ ເນື່ອງຈາກປະລິມານການສະໜອງນ້ຳມັນຂອງກຸ່ມ OPEC ຫຼຸດລົງ 1,07 ລ້ານບາເຣວ/ວັນ ເປັນ 32,27 ລ້ານບາເຣວ/ວັນ ໃນເດືອນ 01/2017 ທຽບເດືອນຜ່ານມາ ບວກກັບຄັງສຳຮອງນ້ຳມັນແອັດຊັງຂອງ ສາຫະລັດອາເມລິກາ ຫຼຸດລົງ 0,9 ລ້ານບາເຣວ

ທຽບອາທິດຜ່ານມາ. ສໍາລັບລາຄາຄໍາ ເພີ່ມຂຶ້ນ 0,91% ເປັນ 1.224,50 ໂດລາ/ອອນ ເນື່ອງຈາກພາຍຫຼັງກອງທຶນຄໍາທີ່ໃຫຍ່ທີ່ສຸດຂອງໂລກ (SPDR) ເຂົ້າຊື້ຄໍາ ເພີ່ມຂຶ້ນໃນຈໍານວນ 21,36 ໂຕນ ຈາກ 789,86 ໂຕນ ມາເປັນ 811,22 ໂຕນ ໃນວັນທີ 09/02/2017.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,03% ແຕ່ແຂງຄ່າ 0,12% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,82% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 3,56% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 03/02/2016 | | | ອາທິດນີ້ 10/02/2017 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.309,20 | 8.352,33 | 8.325,91 | 8.313,80 | 8.351,17 | 8.325,51 | -0,06% | 0,01% | -0,03% | -1,95% | -1,72% | -1,82% |
| ບາດ | 235,98 | 238,05 | 237,33 | 235,91 | 237,78 | 237,04 | 0,03% | 0,12% | 0,12% | -3,49% | -3,70% | -3,56% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ເພີ່ມຂຶ້ນ 1,02% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,13%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,29% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,77%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (03-09/02/2017) ເຫັນວ່າ ທທກ ຊື້-ຂາຍໂດລາສຸດທິ 19,02 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 53,16 ລ້ານໂດລາ ແລະ ຂາຍໂດລາໄດ້ 34,14 ລ້ານໂດລາ) ແລະ ຊື້-ຂາຍເງິນບາດສຸດທິ 1.295,61 ລ້ານບາດ (ໃນນີ້ ຊື້ບາດໄດ້ 187,06 ລ້ານບາດ ແລະ ຂາຍບາດໄດ້ 1.482,67 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາ ຫຼຸດລົງ 6,10% ແຕ່ ສໍາລັບເງິນບາດເພີ່ມຂຶ້ນ 59,30%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈໍານວນ 7 ລ້ານໂດລາ ແລະ ຊື້ເງິນບາດສຸດທິ ຈໍານວນ 5,9 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈໍານວນ 1,20 ລ້ານໂດລາສະຫະລັດ ແລະ ເງິນບາດ 38,99 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 27/1/-02/2/2017 | | ອາທິດທີ 03-09/2/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **42,40** | **154,36** | **53,16** | **187,06** | **25,38%** | **21,18%** |
| - ທ/ຄທຸລະກິດລັດ | 15,46 | 150,45 | 9,98 | 142,30 | -35,45% | -5,42% |
| - ທ/ຄທຸລະກິດອື່ນໆ | 26,94 | 3,91 | 43,18 | 44,76 | 60,28% | 1.044,76% |
| **2. ການຂາຍເງິນຕາຕ່າງປະເທດ** | **50,57** | **893,83** | **34,14** | **1.482,67** | **-32,49%** | **65,88%** |
| - ທ/ຄທຸລະກິດລັດ | 13,75 | 285,31 | 17,63 | 176,50 | 28,22% | -38,14% |
| - ທ/ຄທຸລະກິດອື່ນໆ | 36,82 | 608,52 | 16,51 | 1.306,17 | -55,16% | 114,65% |
| **ຊື້-ຂາຍສຸດທິ ທທກ** | **8,17** | **-739,47** | **19,02** | **-1.295,61** | **-332,80%** | **75,21%** |
| - ຜິດດ່ຽງ ຊື້-ຂາຍ | -19,27% | -479,06% | 35,78% | -692,62% | -285,68% | 44,58% |
| - ມູນຄ່າການຊື້-ຂາຍ | **92,97** | **1.048,19** | **87,30** | **1.669,73** | **-6,10%** | **59,30%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-23,75** | **0** | **-7,00** | **5,90** | | |
| - ທຫລ ຊື້ຈາກ ທທກ | 0 | 0 | 0,05 | 10,00 | | |
| - ທຫລ ຂາຍໃຫ້ ທທກ | 23,75 | 0 | 7,05 | 4,10 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0,81** | **67,79** | **1,20** | **38,99** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0** | **0** | **0** | **0** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0 | 0 | 0 | 0 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0 | 0 | 0 | 0 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 01/2017 ຢູ່ໃນລະດັບ 2, 27% ຫຼຸດລົງຈາກ 2,49% ໃນເດືອນ 12/2016.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າປະເທດ ເພີ່ມຂຶ້ນ 71,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 64,82 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 702 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 124 ສະບັບ ເທົ່າກັບ 15,01% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 409,83 ຕື້ກີບ ເພີ່ມຂຶ້ນ 83,86 ຕື້ກີບ ເທົ່າກັບ 25,72% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (03-09/2/2017) ມີທັງໝົດ 2.179 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.175 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງຈາກ 319,47 ຕື້ກີບ ມາເປັນ 320, 77 ຕື້ກີບ ເທົ່າກັບ 49,89%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 4 ຄັ້ງ, ມູນຄ່າການໂອນ 49 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.032,47 ຈຸດ ຫຼຸດລົງ 2,38% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 210.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 663,3 ລ້ານກີບ ເພີ່ມຂຶ້ນ 221,70% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 56,66% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 30/1/-03/2/2017 | ດັດຊະນີອາທິດທີ 06-10/2/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.057,21 | 1.032,47 | 2,38% | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 15.400 | 86.920.000 | 5.644 | 13.800 | 78.620.000 | 5.697 | - 10,39 | - 9,55 | 53 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 22.200 | 111.300.000 | 5.014 | 41.000 | 209.490.000 | 5.110 | 84,68 | 88,22 | 96 |
| ບໍລິສັດລາວເວິນ ມະຫາຊົນ | 0 | 0 | 5.800 | 0 | 0 | 5.800 | - | - | - |
| ບໍລິສັດປີໂຕລ້ຽມເທລດ ດິ້ງລາວ ມະຫາຊົນ | 1.000 | 2.450.000 | 2.450 | 155.100 | 374.670.000 | 2.416 | 15.410 | 15,.92,65 | - 34 |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | 1.800 | 5.550.000 | 3.083 | 200 | 620.000 | 3.100 | - 88,89 | - 88,83 | 17 |
| ທັງໝົດ | **40.400** | **206.220.000** | | **210.100** | **663.400.000** | | 420,05 | 221,70 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- **ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມຮ່ວມກັນລະຫວ່າງກົມນະໂຍບາຍເງິນຕາ ແລະ ກົມບໍລິການ ກ່ຽວກັບວຽກງານປະລິມານເງິນ ທີ່ (ທຫລ); ❷ ກອງປະຊຸມສຳມະນາຮ່ວມກັນລະຫວ່າງ ທຫລ ແລະ ກອງທຶນສາກົນ ກ່ຽວກັບວຽກງານຄຸ້ມຄອງເສດຖະກິດມະຫາພາກໃຫ້ແກ່ການນຳຂັ້ນສູງຂອງ ສປປ ລາວ ທີ່ (ໂຮງແຮມລາວພາຊາ); ❸ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍການຊຳລະສະສາງແຫ່ງຊາດທີ່ (ທຫລ); ແລະ ❹ ກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້າວິທີການຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ);
- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມວຽກງານການເຊື່ອມໂຍງຂອງຂະແໜງການເງິນ-ເງິນຕາອາຊຽນໃນລະຫວ່າງວັນທີ 6-11 ກຸມພາ 2017 ທີ່ (ປະເທດຟີລິບປິນ); ❷ ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະຊີ້ນຳລວມ ເພື່ອຄົ້ນຄວ້າລາຍຊື່ເປົ້າໝາຍຂອງບັນດາບໍລິສັດທີ່ຈະເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບ ໃນ

ວັນທີ 2 ກຸມພາ 2017;

- ຄະນະຜູ້ວ່າການໄດ້ສຳເລັດລົງເຄື່ອນໄຫວອອກວຽກງານທາງລັດຖະການຢູ່ທ້ອງຖິ່ນ ແຕ່ວັນທີ 9-11 ກຸມພາ 2017 ທີ່ແຂວງຈຳປາສັກ.

- ຮັບຕ້ອນການເຂົ້າຢ້ຽມຂໍ່ານັບຄະນະນຳຂອງ ທຫລ ເປັນຕົ້ນແມ່ນ ອົງການສະຫະປະຊາຊາດ ເພື່ອພັດທະນາທຶນ; ທ່ານຫົວໜ້າໂຄງການເຂດເສດຖະກິດພິເສດ ແລະ ປະທານບໍລິສັດ BNK Capital ສ.ເກົາຫຼີ,

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.

- ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງຮ່າງຂໍ້ຕົກລົງວ່າດ້ວຍ (1) ການບັນຊີ ແລະ ການກວດສອບວຽກງານຫຼັກຊັບ, (2) ການໄດ້ມາ ແລະ ຈຳໜ່າຍຊັບສິນຂອງບໍລິສັດຈົດທະບຽນ, (3) ສິດ ແລະ ໜ້າທີ່ຂອງຜູ້ກຳນົດລະຫັດຫຼັກຊັບແຫ່ງຊາດ, (4) ຕົວແທນຜູ້ຖືຮຸ້ນກູ້ (Bond Rep), (5) ນາຍທະບຽນຜູ້ຖືຮຸ້ນ (Bond Registar) ແລະ (6) ການສ້າງ, ພັດທະນາ ແລະ ນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງບໍລິສັດຫຼັກຊັບ;

- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ກອງປະຊຸມສອງຝ່າຍລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານແຫ່ງລັດຫວຽດນາມ ທີ່ (ທຫລ ຫຼວງພະບາງ); ❷ ກອງປະຊຸມວຽກງານກວດກາບັນຊີ ແລະ ກວດນັບຊັບສິນບັດ ປະຈຳປີ 2016 ທີ່ (ທຫລ);

- **ກະກຽມເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມລັດຖະບານ ສະໄໝວິສາມັນ ປະຈຳເດືອນກຸມພາ 2017; ❷ ເປັນປະທານພິທີປະກາດການຈັດຕັ້ງຂອງ ທະນາຄານສົ່ງເສີມກະສິກຳ ທີ່ (ທສກ ສຳນັກງານໃຫຍ່).

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ປະທານບໍລິຫານກຸ່ມບໍລິສັດການເງິນເຄບີ ແລະ ທະນາຄານກຸກມິນ ສ.ເກົາຫຼີ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ